ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກຳມະບານຮາກຖານ ທຫລ ສ້າງຂະບວນການຂໍານັບຮັບຕອນວັນກຳມະກອນສາກົນ ທີ 1 ພຶດສະພາ ຢ່າງຟົດຟື້ນ



ໃນຕອນບ່າຍຂອງວັນທີ 29 ເມສາ 2022 ທີ່ຜ່ານມາ ກຳມະບານຮາກຖານທະນາຄານແຫ່ງ ສປປລາວ (ທຫລ) ໄດ້ເຕົ້າໂຮມກ້ອນກໍາລັງ ເພື່ອສ້າງຂະບວນການເພື່ອຂໍານັບຮັບຕ້ອນວັນກຳມະກອນສາກົນ ຄົບຮອບ 136 ປີ (ວັນທີ 1 ພຶດສະພາ 1886 – 1 ພຶດສະພາ 2022) ເຊິ່ງນໍາພາໂດຍ ສະຫາຍ ເສີມທະວີ ສີຫາຟົມ ປະທານກຳມະບານຮາກຖານ ທຫລ, ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ  ພ້ອມດ້ວຍຄະນະ ແລະ ສະມາຊິກກຳມະບານຮາກຖານ ທຫລ ເຂົ້າຮ່ວມ.

ໃນພິທີໄດ້ມີການຈັດຕັ້ງກ້ອນກໍາລັງສະມາຊິກ ເພື່ອຮັບຟັງປະຫວັດມູນເຊື້ອສາມັກຄີຕໍ່ສູ້ຂອງຊາວກໍາມະກອນ ແລະຮັບຮູ້ກ່ຽວກັບປະຫວັດແຫ່ງການກໍາເນີດເຕີບໃຫຍ່ຂອງຊົນຊັ້ນກໍາມະກອນແລະພາລະກໍາປະຫວັດສາດຂອງຂະບວນກໍາມະກອນສາກົນກໍ່ຄືການຂະຫຍາຍຕົວຂອງຊົນຊັ້ນກຳມະກອນລາວສັງລວມແລ້ວວັນທີ 1 ພຶດສະພາ 1886 ເປັນວັນທີ່ກໍາມະກອນທົ່ວໂລກຈາລຶກໄວ້ເພື່ອສະແດງຜົນສໍາເລັດໃນຂະບວນການຕໍ່ສູ້ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງຕົນຢູ່ບັນດາປະເທດທຶນນິຍົມເຮັດໃຫ້ການຕໍ່ສູ້ຂອງຊົນຊັ້ນກຳມະກອນໃນແຕ່ລະໄລຍະໄດ້ຮັບການບັນທຶກໃຫ້ເປັນພາລະກໍາປະຫວັດສາດສະແດງໃຫ້ເຫັນວ່າ: ຊົນຊັ້ນກໍາມະກອນແມ່ນຊົນຊັ້ນນໍາໜ້າຂອງຍຸກສະໄໝຕິດພັນກັບການຜະລິດ, ມີລະບຽບວິໄນ, ມີຫົວຄິດປະດິດສ້າງ, ມີຄວາມສາມາດທີ່ຈະລົບລ້າງການກົດຂີ່ທີ່ບໍ່ຍຸຕິທໍາແລະສ້າງສັງຄົມໃໝ່ທີ່ກ້າວໜ້າ, ສີວິໄລແລະຍຸຕິທໍາພາຍໃຕ້ການນໍາພາຂອງພັກຄອມມູນິດ.




ສະເພາະຢູ່ໃນສປປລາວຊົນຊັ້ນກຳມະກອນລາວກໍ່ຄືຊາວຜູ້ອອກແຮງງານລາວບັນດາເຜົ່າທີ່ເປັນກຳລັງສຳຄັນປະກອບສ່ວນເຂົ້າໃນຂະບວນການປະຕິວັດຕໍ່ສູ້ເອົາສິດຄວາມເປັນເຈົ້າຂອງປະເທດຊາດຂອງຕົນເອງດ້ວຍການເຂົ້າຮ່ວມຂະບວນການຕໍ່ສູ້ຂອງພັກຄອມມູນິດອິນດູຈີນທີ່ໄດ້ຮັບການສ້າງຕັ້ງຂຶ້ນວັນທີ 3 ກຸມພາ 1930 ຊຶ່ງເປັນພັກທີ່ເຕົ້າໂຮມຊົນຊັ້ນກຳມະກອນ ແລະ ຊາວນາຈາກ 3 ປະເທດຄື: ລາວ, ຫວຽດນາມແລະກຳປູເຈຍເພື່ອຕ້ານພວກລ່າເມືອງຂຶ້ນແບບເກົ່າ, ໂຄ່ນລົ້ມຈັກກະພັດຜູ້ຮຸກຮານ, ລົບລ້າງລະບອບສັກດີນາແລະນາຍທຶນຕ່າງດ້າວທີ່ກົດຂີ່ຂູດຮີດຈົນສາມາດລຸກຮື້ຂຶ້ນຍຶດອຳນາດການປົກຄອງແລະຍາດເອົາຄວາມເປັນເອກະລາດແຫ່ງຊາດ.







ພາຍຫຼັງຮັບຟັງປະຫວັດມູນເຊື້ອສາມັກຄີຕໍ່ສູ້ຂອງຊາວກຳມະກອນແລະຮັບຮູ້ກ່ຽວກັບປະຫວັດແຫ່ງການກຳເນີດ ແລະ ເຕີບໃຫຍ່ຂອງຊົນຊັ້ນກຳມະກອນ ບັນດາສະມາຊິກກຳມະບານຮາກຖານ ທຫລ ກໍ່ໄດ້ພ້ອມກັນອອກແຮງງານລວມ ໂດຍການອານາໄມບໍລິເວນ ສຳນັກງານ ທຫລ ເພື່ອໃຫ້ມີຄວາມສະອາດສວຍງາມຢ່າງເປັນຂະບວນຟົດຟື້ນ.

**# ພາບຂ່າວ: ສົມອົກ ເຄນຄຳແພງ**




## *ຢູ່ເມືອງລາວ ໃຊ້ແຕ່ເງິນກີບ*